ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຊຽງຂວາງ

ສຳນັກງານປົກຄອງແຂວງ

ເລກທີ່..264..../ຈຂ,ຊຂ

ລົງວັນທີ່..28/3/2016

# ຂໍ້ຕົກລົງ

## ຂອງເຈົ້າແຂວງ-ແຂວງຊຽງຂວາງ

### ວ່າດ້ວຍການປິດສະໜາມຂີ້ເຫຍື້ອແຫ່ງເກົ່າຢູ່ບ້ານນາໂອ ແລະ ໄປນຳໃຊ້ສະໜາມຊົ່ວຄາວຢູ່ບ້ານມ່ວງພາ

- ອີງໃສ່ ສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້ານະຄອນຫຼວງທີ່ລະບຸໄວ້ໃນພາກທີ່ II ໝວດທີ່ III ມາດຕາ 14 ຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ.
- ອີງໃສ່ ໜັງສືສະເໜີ ຂອງອົງການພັດທະນາ ແລະ ບໍລິຫານຕົວເມືອງ-ເມືອງແປກ ສະບັບເລກທີ່ 152/ອພບຕ-ຊຂ, ລົງວັນທີ່ 2/3/2015.

## ເຈົ້າແຂວງ-ແຂວງຊຽງຂວາງ ຕົກລົງ:

ມາດຕາ 01: ວ່າດ້ວຍການຕົກລົງ.

1.1 ຕົກລົງປິດສະໜາມຂີ້ເຫຍື້ອຢູ່ບ້ານນາໂອເປັນທາງການໃນວັນທີ 3 ມີນາ 2016.

1.2 ໃນໄລຍະທີ່ກຳລັງກໍ່ສ້າງສະໜາມຂີ້ເຫຍື້ອແຫ່ງໃໝ່ແມ່ນໃຫ້ໄປນຳໃຊ້ສະໜາມຂີ້ເຫຍື້ອຊົ່ວຄາວຢູ່ບ້ານມ່ວງພາເມືອງແປກແຂວງຊຽງຂວາງ.

1.3 ສ່ວນສະໜາມຂີ້ເຫຍື້ອແຫ່ງທີ່ປິດລົງແລ້ວນີ້ມີເນື້ອທີ ຈຳນວນ 2.680,139 $m^2$ ແມ່ນໃຫ້ເປັນດິນສະຫງວນຂອງລັດເພື່ອຈະໄດ້ນຳໃຊ້ເຂົ້າໃນວຽກງານອື່ນຕາມການເໝາະສົມ.

ມາດຕາ 02: ວ່າດ້ວຍການຈັດຕັ້ງປະຕິບັດ.

2.1 ມອບໃຫ້ເຈົ້າເມືອງ-ເມືອງແປກ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ອົງການພັດທະນາ ແລະ ບໍລິຫານຕົວເມືອງ-ເມືອງແປກ,ອົງການຈັດຕັ້ງຕ່າງໆ ແລະ ພໍ່ແມ່ປະຊາຊົນຈົ່ງຮັບຮູ້ຢ່າງທົ່ວເຖິງ ແລະ ຈັດຕັ້ງປະຕິບັດ.

2.2 ໃຫ້ເມືອງແປກ ແລະ ອພບຕ ເຮັດແຈ້ງການໃຫ້ທຸກພາກສ່ວນຊາບ ແລະ ຈັດຕັ້ງປະຕິບັດ.

ມາດຕາ 03: ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ແລະ ນຳໃຊ້ໄດ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຮອງເຈົ້າແຂວງ-ແຂວງຊຽງຂວາງ

ບົວສອນ ສີນວນທອງ